# ການສຶກສາການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ທີ່ວິທະຍາໄລ ຄູສາລະວັນ

*ຫອມເພັດ ວໍລະສານ*[1]*, ສາຍສະໝອນ ປຣາສອນໄຊ*[2]*, ບຸນສິງ ສໍແກ້ວມະນີ*[3]*, ທິບພະວັນ ຂັນທະພອນ*[4]

**ບົດຄັດຫຍໍ້**

ການສຶກສາໃນຫົວຂໍ້'ການສຶກສາການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ທີ່ວິທະຍາໄລ ຄູສາລະວັນ' ເປັນການວິໄຈແບບສຳຫຼວດ (Survey research) ມີຈຸດປະສົງ: 1) ເພື່ອສຶກສາ ສະພາບການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີວິທະຍາໄລຄູສາລະວັນ, 2). ປຽບທຽບຄວາມເພິ່ງພໍໃຈຂອງຄູສອນ ແລະ ນັກສຶກສາ ຕໍ່ການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ຢູ່ທີ່ ວິທະຍາໄລຄູ ສາລະວັນ, 3). ເພື່ອສຶກສາເຖິງທັດສະນະ, ຄວາມຄິດເຫັນຂອງຄູ ແລະ ນັກສຶກສາ ຕໍ່ກັບການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູ ສາລະວັນ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ທັງໝົດຈຳນວນ 300 ຄົນ ໃນນັ້ນມີຄູສອນ ຈຳນວນ 70 ຄົນ ແລະ   ນັກສຶກສາ ຈຳນວນ 230 ຄົນ. ເຄື່ອງມືສຳລັບການວິໄຈແມ່ນ ແບບສອບຖາມ(Questionnaire ). ຜົນການວິໄຈພົບວ່າ:

1) ສະພາບການຈັດກິດຈະກຳການຮຽນ-ການສອນຮູບແບບເຊິ່ງໜ້າ ມີຂໍ້ສະດວກຫຼາຍດ້ານໃຫ້ແກ່ຄູສອນເຊັ່ນ: ການກະກຽມສື່ການຮຽນ-ການສອນ, ການສະແດງລັກສະນະທ່າທາງ, ການຕັ້ງຄຳຖາມ, ການສ້າງສະຖານະການ, ການສະຫຼູບບົດຮຽນ ແລະ ການວັດຜົນ-ປະເມີນຜົນ, ຄູສອນ ແລະ ນັກສຶກສາໄດ້ມີຄຳເຫັນຢັ້ງຢືນໃນລະດັບຫຼາຍ ແຕ່ ສະພາບການຈັດກິດຈະກຳການຮຽນ-ການສອນແບບອອນໄລນ໌ ແມ່ນຍັງມີຂໍ້ຫຍຸ້ງຍາກຫຼາຍດ້ານທັງດ້ານສິ່ງອຳນວຍຄວາມສະດວກ, ພື້ນຖານໂຄງລ່າງຂອງສະຖານການສຶກສາ ແລະ ຄວາມຮູ້ ຄວາມສາມາດໃນການນຳໃຊ້ເຕັກໂນໂລຊີສຳລັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ຂອງຄູສອນ ແລະ ນັກສຶກສາໃນລະດັບປານກາງ.

2) ປຽບທຽບຄວາມຄິດເຫັນກ່ຽວກັບຄວາມເພິ່ງພໍໃຈລະຫວ່າງຄູສອນ ແລະ ນັກສຶກສາ ຕໍ່ການຮຽນຮູບແບບອອນໄລນ໌ ໃນວິທະຍາໄລຄູສາລະວັນ ສ່ວນຫຼາຍເຫັນວ່າມີຄວາມຄິດເຫັນແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງສະຖິຕິຢູ່ທີ່ 0.05 (ຍອມຮັບສົມມຸດຖານ), ຍົກເວັ້ນຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແມ່ນຄືກັນ (ປະຕິເສດສົມມຸດຖານ). 2) ຄວາມຄິດເຫັນກ່ຽວກັບຄວາມເພິ່ງພໍໃຈລະຫວ່າງຄູສອນ ແລະ ນັກສຶກສາ ຕໍ່ການຮຽນຮູບແບບເຊິ່ງໜ້າ ໃນວິທະຍາໄລຄູສາລະວັນ ສ່ວນຫຼາຍເຫັນວ່າມີຄວມຄິດເຫັນແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງສະຖິຕິຢູ່ທີ່ 0.05 (ຍອມຮັບສົມມຸດຖານ) ແຕ່ດ້ານຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແມ່ນຄືກັນ (ປະຕິເສດສົມມຸດຖານ). 3) ຄູສອນໃນວິທະຍາໄລຄູສາລະວັນ ທີ່ມີວຸດທິແຕກຕ່າງກັນໂດຍສ່ວນຫຼາຍມີຄວາມເພິ່ງພໍໃຈແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05(ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ, ດ້ານຄວາມສາມາດຂອງຄູສອນ ບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ). 4) ຄູສອນໃນວິທະຍາໄລຄູສາລະວັນ ຜູ້ທີ່ມີປະສົບການເຮັດວຽກແຕກຕ່າງກັນມີຄວາມເພິ່ງພໍໃຈ ບໍ່ແຕກຕ່າງກັນ (ປະຕິເສດສົມມຸດ

[1] *ວິທະຍາໄລຄູສາລະວັນ, ອີເມວ: homphet.vorlasane@gmail.com*

[2] *ມະຫາວິທະຍາໄລແຫ່ງຊາດ*

[3] *ຄະນະສຶກສາສາດ, ມະຫາວິທະຍາໄລຈຳປາສັກ*

[4] *ຄະນະສຶກສາສາດ, ມະຫາວິທະຍາໄລຈຳປາສັກ*

ຖານ) ໝາຍຄວາມວ່າຄູສອນ ວິທະຍາໄລຄູສາລະວັນທີ່ມີປະສົບການເຮັດວຽກແຕກຕ່າງກັນ ມີຄວາມເພິ່ງພໍໃຈຄືກັນ. 5) ນັກສຶກສາ ທີ່ມີຂັ້ນຮຽນແຕກຕ່າງກັນ ລະຫວ່າງການຮຽນຮູບແບບເຊິ່ງໜ້າ ແລະ ແບບອອນໄລນ໌ ໃນວິທະຍາໄລຄູສາລະວັນ ມີຄວາມເພິ່ງພໍໃຈແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05(ຍອມຮັບສົມມຸດຖານ) ແຕ່ຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແມ່ນບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ).
3) ທັດສະນະ, ຄວາມຄິດເຫັນຂອງຄູ ແລະ ນັກສຶກສາ ຕໍ່ກັບການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູ ສາລະວັນ ໂດຍສະເລ່ຍລວມກວມເອົາເປີເຊັນຫຼາຍທີ່ສຸດ ແມ່ນ ຢູ່ລະດັບບໍ່ສຳຄັນ.

**ຄຳສັບສຳຄັນ:**

- ການຈັດການຮຽນ-ການສອນແບບເຊິ່ງໜ້າ.
- ການຈັດການຮຽນ-ການສອນ ແບບອອນໄລນ໌.
- ຮູບແບບການສອນທີ່ມີປະສິດທິຜົນ
- ຄວາມເພິ່ງພໍໃຈ.

# The study on offline and online learning and teaching implementation at Salavan Teachers' Training College

*Homphet VORLASAN[1], Saysamone PASONEXAI[2], Bounsong SORKEOMANY[3], Thippachan KHANTHAPHONE[4]*

**Abstract**

Studying The Offline and Online Learning and Teaching Implementation at Saravan Teachers' Training College. This is a survey research which aim to 1) to study the environment on The Offline and Online Learning and Teaching Implementation at Saravan Teachers' Training College. 2) To compare the teachers' and students' satisfaction about The Offline and Online Learning and Teaching Implementation at Saravan Teachers' Training College. 3) to study both teachers and learners' attitudes and views on The Offline and Online Learning and Teaching Implementation at Saravan Teachers' Training College. The samples of this are 300 samples, 70 samples are teachers and 230 are learners. The tool is questionnaire, so the finding results are:

1) There have some facilities on both The Offline and the Online Learning and Teaching Implementation such as the preparation of teaching aids, gestures, questioning, making scenario, summary of lesson and evaluation. Both teachers and learners have variety level of recommendation but There also have few difficulties on the offline and online Learning and Teaching Implementation namely the amenities, the infrastructure and the ability of using advanced technology of both teachers and learners which ranged in under-intermediate level.
2) There are different views between teachers and learners Online Learning and Teaching

Implementation, in the statistics of 0.05 (acceptable assumption). There are similar satisfaction on gaining knowledge on technology (deniable assumption). The teachers and learners' satisfaction on Offline Learning and Teaching Implementation at Salavan TTC are different in the statistic of 0.05 (acceptable assumption). However, both have the similarity on facilities (deniable assumption).Each teacher has different qualification, so there is different satisfaction in the statistics of 0.05 (acceptable assumption), but the satisfaction on improving technology skills is not different (deniable assumption). Each teacher has different work experiences and has similar satisfaction (deniable assumption). Learners who have different qualification degree have different satisfaction on both offline and online, in the statistics of 0.05

[1] *Salavan Teachers' Training College, Email: : homphet.vorlasane@gmail.com*
[2] *National University of Laos*
[3] *Faculty Education, Champasack University*
[4] *Faculty Education, Champasack University*

(acceptable assumption), but they have similar satisfaction on improving technology skills deniable assumption).

1) To study both teachers and learners' attitudes and views on The Offline and Online Learning and Teaching Implementation at Saravan Teachers' Training College. The over mean accounts for the largest percentage is unimportant.

**Keywords:** The Offline Learning and Teaching Implementation

- The Online Learning and Teaching Implementation
- Effective teaching style
- **Satisfaction**

## 1. ພາກສະເໜີ

ການສຶກສາເປັນບັນຫາທີ່ສໍາຄັນ, ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດໂຄໂຣນາໄວຣັສ 2019 (COVID-19),ໄດ້ສົ່ງຜົນກະທົບຕໍ່ໂລກ, ຕໍ່ປະຊາຊົນຢ່າງກວ້າງຂວາງ, ມີຈໍານວນຄົນທີ່ຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນໃນເວລາອັນສັ້ນ ເຮັດໃຫ້ເສດຖະກິດ-ສັງຄົມ ແລະ ການສຶກສາໄດ້ຮັບຜົນກະທົບຢ່າງກ້ວາງຂວາງ; ເຮັດໃຫ້ການຮຽນ-ການສອນພົບກັບຂໍ້ຫຍຸ້ງຍາກຫຼາຍດ້ານ ເຮັດໃຫ້ຜູ້ບໍລິຫານການສຶກສາຕ້ອງໄດ້ວາງທິດທາງແກ້ໄຂສະຢ່າງເລັ່ງດ່ວນ ໂດຍຊຸກຍູ້ສົ່ງເສີມໃຫ້ຄູສອນ ແລະ ນັກຮຽນ-ນັກສຶກສາຕ້ອງໄດ້ປັບຕົວເຂົ້າຮູບແບບວິຖີຊີວິດ ແລະ ການຮຽນ-ການສອນແບບໃໝ່ ເພື່ອເຮັດເສດຖະກິດ-ສັງຄົມ ແລະ ການສຶກສາ ສາມາດດໍາເນີນໄປຢ່າງຕໍ່ເນື່ອງ.

ບຸນທົບ ສິດທິລັງສີ (2020:1-17). ສຶກສາພົບວ່າການແຜ່ລະບາດຂອງ ພະຍາໂຄວິດ19 ໄດ້ສົ່ງຜົນເຮັດໃຫ້ພຶດຕິກໍາຂອງມະນຸດ, ພຶດຕິກໍາການບໍລິໂພກ, ການບໍລິການ ແລະ ການສຶກສາໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງໃນຫຼາຍດ້ານ, ສົ່ງຜົນກະທົບໃນຫຼາຍຂະແໜງການເຊັ່ນ:ເສດຖະກິດ, ສັງຄົມ, ການທ່ອງທ່ຽວ, ເຕັກໂນໂລຊີ ແລະ ການສຶກສາ ແລະ ຍັງສົ່ງຜົນໃຫ້ສະຖານການສຶກສາຫຼາຍແຫ່ງບໍ່ສາມາດຈັດການຮຽນ-ການສອນໄດ້ເປັນປົກກະຕິ.

(WHO, UNICEF, 2020), ໄດ້ສະເໜີແນວທາງການປ້ອງກັນ ແລະ ຄວບຄຸມການລະບາດໃນໂຮງຮຽນ, ໂດຍການເນັ້ນໃສ່ການປົກປ້ອງສິ່ງສິ່ງແວດ

ສໍາລັບວິທະຍາໄລຄູສາລະວັນ ກໍ່ເປັນໜຶ່ງສະຖາບັນການສຶກສາ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດພະຍາດ COVID-19 ແລະ ເປັນບ່ອນທີ່ມີນັກສຶກສາຈໍານວນຫຼາຍຈຶ່ງມີຄວາມສ່ຽງສູງທີ່ຈະເກີດການແຜ່ລະບາດຂອງເຊື້ອໄວຣັດ ເພື່ອຫັກສາມາດຕະການ ແລະ ປ້ອງການການແຜ່ລະບາດຂອງພະຍາດ.

ກະຊວງສຶກສາທິການ ແລະ ກິລາ ( 2021), ມີແຈ້ງການວິທະຍາໄລ ປະຕິບັດຄໍາສັ່ງແນະນໍາ ຂອງຄະນະສະເພາະກິດ ຂອງແຂວງສາລະວັນ ແຈ້ງການຂອງທ່ານເຈົ້າແຂວງໆ ສາລະວັນຕາມແຈ້ງການ (ໄລຍະວັນທີ 23 ພຶດສະພາ 20 21 ຫາ 5 ມິຖຸນາ 20 21) ເພື່ອໃຫ້ນັກຮຽນສາມາດສືບຕໍ່ຮຽນຢ່າງຕໍ່ເນື່ອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ ແລະ ຊ່ວຍເຫຼືອນັກຮຽນ ແລະຊຸກຍູ້ສົ່ງເສີມຄູສອນ ພ້ອມທັງຄຸ້ມຄອງການຮຽນ-ການສອນແບບອອນໄລນ໌ ໂດຍ ການສະໜັບສະໜູນ, ສົ່ງເສີມ, ພັດທະນາ, ປ້ອງກັນ ແລະ ແກ້ໄຂບັນຫານັກຮຽນ. ເພື່ອໃຫ້ນັກຮຽນມີຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ ທັງມີຄຸນນະພາບຊີວິດທີ່ດີ ໃນສະຖານະການການລະບາດຂອງພະຍາດໂຄວິດ19 ເພື່ອຮັບປະກັນການຈັດຕັ້ງຮຽນ-ການສອນ ໃຫ້ມີຈໍານວນນັກຮຽນ-ນັກສຶກສາ ສາມາດເຂົ້າຮ່ວມການຮຽນ-ການສອນໄດ້ໃນຊັດສ່ວນທີ່ສູງ (ແຈ້ງການ, 2021).

ສະນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈ ແລະ ເຫັນເຖິງຄວາມສໍາຄັນ ໃນການສຶກສາ ຫົວຂໍ້ **'ສຶກສາສະພາບການຈັດຕັ້ງການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ທີ່ວິທະຍາໄລ ຄູສາລະວັນ'** ເພື່ອສຶກສາຫາຮູບແບບ ແລະ ວິທີການທີ່ເໝາະສົມ; ຈຸດດີ ແລະ ຂໍ້ຄົງຄ້າງ ແລ້ວນໍາມາເປັນຂໍ້ມູນທີ່ສໍາຄັນ ປະກອບສ່ວນເຂົ້າໃນການປັບປຸງແກ້ໄຂບັນຫາ.

## 2. ວິທີການຄົ້ນຄ້ວາ

### 2.1 ແບບແຜນການວິໄຈ

1. ການອອກແບບການສຶກສາ
2. ການຄັດເລືອກພື້ນທີ່
3. ໄລຍະເວລາການຄົ້ນຄ້ວາ.
4. ປະຊາກອນ ແລະ ກຸ່ມຕົວຢ່າງ.

5. ການພັດທະນາເຄື່ອງມືທີ່ໃຊ້ເກັບກຳຂໍ້ມູນ.
6. ວິທີເກັບກຳຂໍ້ມູນ.
7. ການວິເຄາະຂໍ້ມູນ ແລະ ການ ແປຜົນ.

**2.2 ປະຊາກອນ ແລະ ກຸ່ມຕົວຢ່າງ ປະຊາກອນ:**

ປະຊາກອນທັງໝົດຈຳນວນ 610 ຄົນ, ໃນນັ້ນມີນັກສຶກສາຄູ ປີ 2,3,4 ຈຳນວນ 540 ຄົນ ແລະ ຄູສອນຈຳນວນ 70 ຄົນ. ໃນວິທະຍາໄລຄູສາລະວັນ ສົກຮຽນ 2021-2022.

**ກຸ່ມຕົວຢ່າງ:**

ກຸ່ມຕົວຢ່າງທັງໝົດຈຳນວນ 300 ຄົນ ໃນນັ້ນມີຄູສອນ ຈຳນວນ 70 ຄົນທີ່ມີໜ້າສອນຕົວຈິງ(ເລືອກແບບເຈາະຈົງ), ນັກສຶກສາ ຈຳນວນ 230 ຄົນ ການຄັດເລືອກກຸ່ມຕົວຢ່າງນັກສຶກສາແມ່ນນຳໃຊ້ສູດ Taro Yamane

**2.3 ເຄື່ອງມືທີ່ໃຊ້ໃນການວິໄຈ**

ການວິໄຈ ໃນຫົວຂໍ້ **ການສຶກສາການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ທີ່ວິທະຍາໄລຄູສາລະວັນ**, ເປັນການວິໄຈແບບສຳຫຼວດ (Survey research) ເຄື່ອງມືສຳລັບການວິໄຈແມ່ນ ແບບສອບຖາມ(Questionnaire ) ເຊິ່ງປະກອບມີ 3 ພາກ: ພາກທີ1: ຂໍ້ມູນສ່ວນຕົວ ປະກອບມີ: ເພດ, ວຸດທິການສຶກສາ , ປະສົບການ. ພາກທີ2: ສຶກສາສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນລາຍ ມີຈຳນວນ 22 ຂໍ້, ເປັນແບບສອບຖາມແບບເລືອກຕອບ ທີ່ມີ3-4 ຕົວເລືອກ, ພາກທີ3: ສຶກສາສະພາບຄວາມເພິ່ງພໍໃຈຂອງຄູ ແລະ ນັກສຶກສາ ຈຳນວນ 86 ຂໍ້, ເປັນແບບສອບຖາມປະເມີນຄ່າ 5 ລະດັບ ( Likert scales).

**2.4 ການຫາຄຸນນະພາບຂອງເຄື່ອງມື**

ໃນການຫາຄຸນນະພາບຂອງເຄື່ອງມືແຕ່ລະປະເພດ, ຜູ້ວິໄຈປະຕິບັດ ດັ່ງນີ້:

1. ສ້າງເຄື່ອງມື
2. ນຳເອົາເຄື່ອງມືປຶກສານຳທີ່ປຶກສາ, ຜ່ານຜູ້ຊ່ຽວຊານ ເພື່ອກວດແກ້ຂໍ້ມູນ ແລະ ເນື້ອໃນເພື່ອໃຫ້ ເໝາະສົມ ແລະ ສອດຄ່ອງກັບຄວາມເປັນຈິງ.
3. ປັບປຸງເຄື່ອງມື.

**2.5 ການເກັບລວບລວມຂໍ້ມູນ**

- ຢາຍແບບສອບຖາມໃຫ້ນັກສຶກສາ ແລະ ຄູສອນ( ກຸ່ມຕົວຢ່າງ)
- ສັງລວມຂໍ້ມູນເຂົ້າ SPSS

**2.6 ສະຖິຕິທີ່ໃຊ້ໃນການວິໄຈ**

- ສະຖິຕິທີ່ໃຊ້ໃນການວິໄຈຄັ້ງນີ້ ປະກອບມີ ຄ່າສະເລຍ, ອັດຕາສ່ວນຮ້ອຍ, ສ່ວນບ່ຽງເບນມາດຕະຖາ

**3. ຜົນໄດ້ຮັບ**

1) ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ມີຂໍ້ສະດວກຫຼາຍດ້ານໃຫ້ແກ່ຄູສອນເຊັ່ນ: ການກະກຽມສື່ການຮຽນ-ການສອນ, ການສະແດງລັກສະນະທ່າທາງ, ການຕັ້ງຄຳຖາມ, ການສ້າງສະຖານະການ, ການສະຫຼຸບບົດຮຽນ ແລະ ການວັດຜົນ-ປະເມີນຜົນ, ຄູສອນ ແລະ ນັກສຶກສາໄດ້ມີຄຳເຫັນຢັ້ງຢືນໃນລະດັບຫຼາຍ ສ່ວນ ສະພາບການຈັດກິດຈະກຳການຮຽນ-ການສອນແບບອອນໄລນ໌ ແມ່ນຍັງມີຂໍ້ຫຍຸ້ງຍາກຫຼາຍດ້ານທັງດ້ານສິ່ງອຳນວຍຄວາມສະດວກ, ພື້ນຖານໂຄງລ່າງຂອງສະຖານການສຶກສາ ແລະ ຄວາມຮູ້ ຄວາມສາມາດໃນການນຳໃຊ້ເຕັກໂນໂລຊີສຳລັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ຂອງຄູສອນ ແລະ ນັກສຶກສາໃນລະດັບປານກາງ.
2) ປຽບທຽບລະດັບຄວາມຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ແລະ ແບບເຊິ່ງໜ້າຂອງຄູສອນ.

ຄູສອນໃນວິທະຍາໄລຄູສາລະວັນ ທີ່ມີວຸດທິແຕກຕ່າງກັນ ໂດຍພາບລວມ ແລະ ແຕ່ລະດ້ານເຫັນວ່າ

ມີຄວາມເພິ່ງພໍໃຈ ແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05(ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນການພັດທະນາດ້ານຄວາມຮູ້ເຕັກໂນໂລຊີ ແລະ ດ້ານຄວາມສາມາດຂອງຄູສອນ ບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ).

ຄູສອນໃນວິທະຍາໄລຄູສາລະວັນ ທີ່ມີປະສົບການເຮັດວຽກແຕກຕ່າງກັນມີຄວາມເພິ່ງພໍໃຈໃນ ດ້ານຄວາມເພິ່ງພໍໃຈໃນການພັດທະນາດ້ານຄວາມຮູ້ເຕັກໂນໂລຊີ, ດ້ານຄວາມເພິ່ງພໍໃຈໃນ ດ້ານເຫດຜົນສ່ວນຕົວ, ຄວາມເພິ່ງພໍໃຈໃນ ດ້ານຄວາມສາມາດຂອງຄູສອນ, ຄວາມເພິ່ງພໍໃຈໃນດ້ານສິ່ງອຳນວຍຄວາມສະດວກ ແມ່ນບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ).

ນັກສຶກສາໃນວິທະຍາໄລຄູສາລະວັນ ທີ່ມີຊັ້ນຮຽນແຕກຕ່າງກັນມີຄວາມເພິ່ງພໍໃຈໃນ ຄວາມເພິ່ງພໍໃຈໃນ ດ້ານຄວາມຮູ້ເຕັກໂນໂລຊີ, ດ້ານເຫດຜົນສ່ວນຕົວ, ຄວາມເພິ່ງພໍໃຈໃນ ດ້ານຄວາມສາມາດຂອງຄູສອນ, ຄວາມເພິ່ງພໍໃຈໃນດ້ານສິ່ງອຳນວຍຄວາມສະດວກແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05(ຍອມຮັບສົມມຸດຖານ).

ທັດສະນະ ຄວາມຄິດເຫັນຕໍ່ການປັບປຸງ ການຈັດການຮຽນ-ການສອນທີ່ວິທະຍາໄລຄູສາລະວັນໃຫ້ດີຂຶ້ນເລື້ອຍໆ ເຫັນວ່າຄ່າສະເລ່ຍລວມ ຄູສອນກວມເອົາຈຳນວນຄົນຫຼາຍທີ່ສຸດ ແມ່ນບໍ່ສຳຄັນ ຄິດເປັນເປີເຊັນ 70.8%, ຮອງລົງມາຄວາມສຳຄັນປານກາງ ຄິດເປັນເປີເຊັນ 25.65% ແລະ ສຳຄັນຫຼາຍ3.68%, ສ່ວນນັກສຶກສາກວມເອົາຈຳນວນຄົນຫຼາຍທີ່ສຸດ ແມ່ນບໍ່ສຳຄັນ ຄິດເປັນເປີເຊັນ 60.25%, ຮອງລົງມາຄວາມສຳຄັນປານກາງ ຄິດເປັນເປີເຊັນ 60.25% ແລະ ສຳຄັນຫຼາຍ35.24%.

**4. ວິພາກຜົນ**

ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ຈາກຜົນການຄົ້ນຄ້ວາຂ້າງເທິງນັ້ນເຫັນວ່າວິທະຍາໄລຄູ ສາລະວັນ ດຳເນີນການຮຽນ-ການສອນແບບເຊິ່ງໜ້າ ໃນໄລຍະພາກຮຽນທີ1 ໂດຍປະຕິບັດຕາມຫຼັກສູດການຮຽນ-ການສອນຕາມທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ, ໂດຍເນັ້ນໃສ່ 5 ຫຼັກມູນການສຶກສາ ແລະ ຮັບປະກັນ 3 ຫຼັກສະນະ, ເພື່ອໃຫ້ຮັບປະກັນຄຸນນະພາບໃນການຈັດຫານຮຽນ-ການສອນ, ຍັງໄດ້ມີການຈັດແບ່ງ ແລະ ຊັບຊ້ອນ ພະນັກງານຄູສອນຕາມລາຍວິຊາສະເພາະທີ່ຮຽນຈົບ ແລະ ແບ່ງປັນຊົດສ່ວນທີ່ເໝາະສົມ. ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງທາງດ້ານສັງຄົມ ຄູ-ອາຈານທີ່ສອນໃນສະຖາບັນໄດ້ຈັດການຮຽນ-ການສອນທີ່ເນັ້ນໃຫ້ຜູ້ຮຽນໄດ້ປະຕິບັດຕົວຈິງຫຼາຍຂຶ້ນ, ຄຽງຄູ່ກັນນັ້ນວິທະຍາໄລຄູສາລະວັນ ຍັງສາມາດຕອບສະໜອງແຫ່ງການຮຽນຮູ້ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ ແລະ ອຸປະກອນອື່ນໆໄດ້ຈຳນວນໜຶ່ງ. ພ້ອມກັນນັ້ນຍັງມີການຊຸກຍູ້ໃຫ້ມີການນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນການຈັດການຮຽນ-ການສອນ ແລະ ມີການນຳໃຊ້ສື່ການຮຽນ-ການສອນທີ່ຫຼາກຫຼາຍ ໃນລາຍວິຊາຕ່າງໆ, ເຊິ່ງຂໍ້ມູນດັ່ງກ່າວນີ້ສອດຄ່ອງກັບບົດສະຫຼຸບການຈັດຕັ້ງປະຕິບັດວຽກງານດ້ານວິຊາການ (2021-2022) ທີ່ກ່າວວ່າ ວິທະຍາໄລຄູສາລະວັນເປັນສະຖານການສຶກສາໜຶ່ງທີ່ເຮັດໜ້າທີ່ໃນການສ້າງຄູຫຼາຍສາຂາວິຊາໃນເຂດບໍລິການ ສອງແຂວງ: ສາລະວັນ, ເຊກອງ ແລະ ບັນດາແຂວງພາກກາງ-ໃຕ້ຈຳນວນໜຶ່ງ ໃນການດຳເນີນການຮຽນ-ການສອນແມ່ນປະຕິບັດຕາມຫຼັກສູດສ່ວນກາງທີ່ເນັ້ນ 3 ລັກສະນະ, 5 ຫຼັກມູນ ຂອງການສຶກສາແຫ່ງຊາດ ມີການຈັດແບ່ງ ຊົ່ວໂມງສອນຢ່າງເໝາະສົມ ແລະ ຊັບຊ້ອນຄູສອນຕາມລາຍວິຊາສະເພາະຂອງໃຜລາວ ສາມາດຕອບສະໜອງ ແຫຼ່ງກຫານຮຽນຮູ້ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຟັງສຽງ, ຫ້ອງສື່, ຫ້ອງຝຶກສອນ ໄດ້ໃນລະດັບພື້ນຖານ, ມີການນຳໃຊ້ສື່, ວັດຖຸ-ອຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການ

ຮຽນ-ການສອນ ເພື່ອດຶງດູດ ແລະ ສ້າງແຮງຈູງໃຈໃຫ້ແກ່ຜູ້ຮຽນ...,

**ສະພາບການຈັດການຮຽນ-ການສອນແບບອອນໄລນ໌ມີຄື:** ໝາຍຄວາມວ່າ ວິທະຍາໄລຄູສາລະວັນດຳເນີນການຝຶກອົບຮົມໃນການສ້າງຂີດຄວາມສາມາດໃນການນຳໃຊ້ເຕັກໂນໂລຊີ ຍັງມີລັກສະນະຈຳກັດ, ປະສົບການໃນການຈັດການຮຽນ-ການສອນ ແບບອອນໄລນ໌ຍັງບໍ່ຫຼາຍ, ຄູ-ອາຈານບາງທ່ານ ດຳເນີນການສອນບໍ່ປົກກະຕິ, ການນຳໃຊ້ເຄື່ອງມືເຕັກໂນໂລຊີ ຍັງບໍ່ທັນຊຳນິຊຳນານ, ເຄື່ອງມືເອເລັກໂທນິ ທີ່ໃຊ້ເຂົ້າສອນ ຍັງຈຳກກັດບໍ່ຫຼາກຫຼາຍ ສ່ວນຫຼາຍ ຄູສອນນຳໃຊ້ເຄື່ອງໄອຊີທີ ເຊັ່ນ: ໂທລະສັບ, ຄອມພິວເຕີ ແລະ ວາຍຟາຍອິນເຕີເນັດສ່ວນຕົວ, ສ່ວນນັກສຶກສາ ແມ່ນໃຊ້ພຽງແຕ່ ໂທລະສັບເປັນສ່ວນໃຫຍ່, ການນຳໃຊ້ອິນເຕີເນັດຂອງຄູສອນ ແລະນັກສຶກສາ ສ່ວນຫຼາຍແມ່ນນຳໃຊ້ ຂໍ້ມູນມືຖື(Mobile Data) ເຊິ່ງນຳໃຊ້ງົບປະມານຂ້ອນຂ້າງສູງ, ນັກສຶກສາບາງຄົນ ຢູ່ເຂດຫ່າງໄກສອກຫຼີກ ສັນຍານອິນເຕີເນັດ ເຂົ້າບໍ່ເຖິງ ຈິ່ງເປັນບັນຫາໃນການຈັດການຮຽນກຮຽນ-ການສອນແບບອອນໄລນ໌ ໝາຍຄວາມວ່າ ນັກສຶກສາບໍ່ສາມາດເຂົ້າຮຽນໄດ້, ເຊິ່ງຂໍ້ມູນດັ່ງກ່າວນີ້ສອດກັບບົດສະຫຼຸບການຈັດຕັ້ງປະຕິບັດວຽກງານດ້ານວິຊາການປະຈຳພາກຮຽນທີ່2 (20212022) ຂອງວິທະຍາໄລຄູສາລະວັນ ທີ່ກ່າວວ່າ: ການດຳເນີນການຮຽນ-ການສອນແບບເຊິ່ງໜ້າ ໃນພາກຮຽນທີ່2 ບໍ່ສາມາດດຳເນີນການຮຽນ-ການສອນແບບເຊິ່ງໜ້າໄດ້, ເພາະເປັນຊ່ວງການແຜ່ລະບາດຂອງພະຍາດ ໂຄວິດ-19, ວິທະຍາໄລຄູສາລະວັນໄດ້ກາຍເປັນສູນກັກຕົວ ແລະ ປິ່ນປົວພະຍາດ ໂຄວິດ 19 ເຮັດໃຫ້ວິທະຍາໄລຄູສາລະວັນ ຫັນທິດຈາກການດຳເນີນການຮຽນ-ການສອນແບບເຊິ່ງໜ້າ ເປັນການສອນແບບອອນໄລນ໌ ເຊິ່ງເປັນຮູບແບບການສອນແບບທາງໄກ ທີ່ຜູ້ຮຽນ ແລະ ຜູ້ສອນ ຢູ່ສະຖານທີ່ ທີ່ແຕກຕ່າງກັນ ໂດຍມີການນຳໃຊ້ສື່ ເຕັກໂນໂລຊີ ເຊັ່ນ: ຄອມພິວເຕີ, ໂທລະສັບສະມາດໂຟນ, ເຄືອຄ່າຍອິນເຕີເນັດ ເຂົ້າມາຊ່ວຍ ແລະ ເປັນສື່ກາງໃນການສອນລະຫວ່າງຄູສອນ ແລະ ນັກສຶກສາ ເຊິ່ງຂໍ້ຈຳກັດໃນການດຳເນີນການຮຽນ-ການສອນແບບອອນໄລນ໌ ກໍ່ຄື: ຄູສອນ ແລະ ນັກສຶກສາບາງຈຳນວນຍັງຂາດປະສົບການໃນການຮຽນ-ການສອນແບບອອນໄລນ໌ ຄວາມຮູ້ທາງດ້ານການນຳໃຊ້ເຕັກໂນໂລຊີ ຍັງຈຳກັດ, ນັກສຶກສາທີ່ຢູ່ເຂດຫ່າງໄກສອກຫຼີກ ຍັງບໍ່ສາມາດເຂົ້າເຖິງການຮຽນ-ການສອນແບບອອນໄລນ໌ໄດ້ເນື່ອງຈາກວ່າ ສັນຍານອິນເຕີເນັດບໍ່ສາມາດເຂົ້າເຖິງ, ຄູສອນ ແລະ ນັກສຶກສາບາງຄົນ ຍັງຂາດອຸປະກອນ ໃນການດຳເນີນການຮຽນ-ການອນສອນແບບອອນໄລນ໌, ການຕິດຕາມຊ່ວຍເຫຼືອນັກສຶກສາຂອງຄູ ຍັງບໍ່ທົ່ວເຖິງ, ມີການນຳໃຊ້ງົບປະມານຂ້ອນຂ້າງສູງ ເຊິ່ງເປັນງົບປະມານສ່ວນຕົວຂອງຄູ ແລະ ນັກສຶກສາ.

**2. ປຽບທຽບລະດັບຄວາມຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ແລະ ແບບເຊິ່ງໜ້າຂອງຄູສອນ ຈຳແນກຕາມ ວຸດທິການສຶກສາ, ປະສົບການສອນ ແລະ ນັກສຶກສາຈຳແນກ ຕາມຂັ້ນ**

1) ຜົນການປຽບທຽບຄວາມຄິດເຫັນຂອງຄູສອນ ລະຫວ່າງການຮຽນແບບອອນໄລນ໌ ແລະ ແບບເຊິ່ງໜ້າ **ເຫັນວ່າ** ຄູສອນໃນວິທະຍາໄລຄູສາລະວັນ ທີ່ມີວຸດທິແຕກຕ່າງກັນມີຄວາມເພິ່ງພໍໃຈ ໃນດ້ານເຫດຜົນສ່ວນຕົວ, ດ້ານສິ່ງອຳນວຍຄວາມສະດວກ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05 (ຍອມຮັບສົມມຸດຖານ), ນັ້ນໝາຍຄວາມວ່າ ຄູສອນຜູ້ທີ່ມີວຸດທິການສຶກສາສູງຈະມີຄວາມມັກຮັກໃນການຈັດການຮຽນການສອນແບບອອນໄລນ໌ເພາະວ່າເຂົາເຈົ້າມີໂອກາດ ແລະ ປະສົບການໃນການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ຫຼາຍ ນັບທັງໂອກາດການນຳໃຊ້ເຄື່ອງມືເຕັກໂນໂລຊີຫຼາຍ ແລະ

ພັດທະນາຄວາມຮູ້ຕົນເອງດ້ວຍຫຼາຍຮູບແບບເຊັ່ນ: ການພັດທະນາຄວາມາຮູ້ຕ່າງໆ, ການເຂົ້າຮ່ວມສໍາມະນາ, ການຝຶກອົບຮົມ ແລະ ການແລກປ່ຽນບົດຮຽນກັບຜູ້ຊໍານານງານໃນຂະແໜງການຕ່າງໆ. ເຊິ່ງສອດຄ່ອງກັບງານວິໄຈຂອງ Fiqhi L.D., & Nurul R.,. (2020), ທີ່ເຮັດການຄົ້ນຄ້ວາໃນຫົວຂໍ້ Effectiveness of Online VS Offline Class For EFL Classroom. ທີ່ມີຜົນການວິເຄາະວ່າ ຄູສອນທີ່ມີວຸດທິການສຶກສາໃນລະດັບຕ່າງກັນ ມີຄວາມຄິດເຫັນແຕກຕ່າງກັນ, ສ່ວນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແລະ ດ້ານຄວາມສາມາດຂອງຄູສອນ ມີຄວາມເພິ່ງພໍໃຈຄືກັນ (ປະຕິເສດສົມມຸດຖານ), ນັ້ນໝາຍຄວາມວ່າ ເຖິງວ່າຄູສອນຈະມີວຸດທິການສຶກສາຈະແຕກຕ່າງກັນກໍ່ຕາມ ແຕ່ຍັງຄວາມຕ້ອງການພັດທະນາຄວາມຮູ້ທາງດ້ານເຕັກໂນໂລຊີ ເພື່ອພັດທະນາຄວາມຮູ້ຄວາມສາມາດດ້ານການສອນຂອງຕົນ ເພາະວ່າ ປັດຈຸບັນວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນຂ່າວສານມີການພັດທະນາ ແລະ ມີການປ່ຽນແປງຢ່າງໄວວາ ເພື່ອໃຫ້ປັບໂຕໃຫ້ທັນກັບສະພາບການປ່ຽນແປງດັ່ງກ່າວນັ້ນ ຄູສອນທຸກຄົນມີຄວາມຈໍາເປັນຕ້ອງພັດທະນາຄວາມຮູ້, ຄວາມສາມາດ ທາງດ້ານວິຊາສະເພາະ, ດ້ານວິຊາຊີບຄູ, ດ້ານຄວາມຮູ້ຕໍ່ກັບຜູ້ຮຽນພິເສດແມ່ນຄວາມຮູ້ທາງດ້ານວິທະຍາສາດເຕັກໂນໂລຊີ ສະນັ້ນຈິ່ງເຮັດໃຫ້ຄູສອນ ທີ່ວິທະຍາໄລຄູສາລະວັນມີຄວາມເພິ່ງພໍໃຈດ້ານການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແລະ ດ້ານຄວາມສາມາດທີ່ຄ້າຍຄືກັນ ເຊິ່ງສອດຄ່ອງກັບທິດສະດີຂອງ ພາພູມິ ສຸລິຍາ ໄຊວັດທະນະ (1999) ທີ່ໄດ້ກ່າວວ່າ ມະນຸດເຮົາທຸກຄົນທີ່ດໍາລົງຊີວິດໃນຍຸກ ສະຕະວັດທີ່ 21 ເຊິ່ງເປັນຍຸກແຫ່ງການປ່ຽນແປງທາງດ້ານວິທະຍາສາດເຕັກໂນໂລຊີ, ຂໍ້ມູນຂ່າວສານຍຸກແຫ່ງການສື່ສານແບບໄຮ້ພົມແດນ ມີຄວາມຈໍາເປັນຢ່າງຍິ່ງທີ່ມະນຸດເຮົາຕ້ອງໄດ້ມີການປັບຕົວ ແລະ ພັດທະນາຕົນເອງໃຫ້ທັນກັບສະພາບການປ່ຽນແປງໂດຍສະເພາະການພັດທະນາທາງດ້ານເຕັກໂນໂລຊີທີ່ທັນສະໄໝ ເພື່ອໝູນໃຊ້ຄວາມຮູ້ ແລະ ປະສົບການເຂົ້າໃນວຽກງານຕົວຈິງຢ່າງມີປະສິດ ທິຜົນ.

2) ຜົນການປຽບທຽບຄວາມຄິດເຫັນຂອງຄູສອນໃນວິທະຍາໄລຄູສາລະວັນ ຜູ້ທີ່ມີປະສົບການເຮັດວຽກແຕກຕ່າງກັນມີຄວາມເພິ່ງພໍໃຈ ຄືກັນ (ປະຕິເສດສົມມຸດຖານ) ໝາຍຄວາມວ່າຄູສອນ ວິທະຍາໄລຄູສາລະວັນທີ່ມີປະສົບການເຮັດວຽກແຕກຕ່າງກັນ ມີຄວາມເພິ່ງພໍໃຈຄືກັນ, ສະແດງໃຫ້ເຫັນວ່າຄູສອນໃນວິທະຍາໄລຄູສາລະວັນແມ່ນມີຄວາມຕ້ອງການພັດທະນາຄວາມຮູ້ໃໝ່ໆ ເພາະວ່າ ອາຊີບຄູເປັນອາຊີບທີ່ຕ້ອງມີການພັດທະນາຄວາມຮູ້ຢ່າງເນື່ອງເພື່ອໃຫ້ແທດເໝາະກັບສະພາບການປ່ຽນທາງດ້ານສັງຄົມ ໂດຍສະເພາະແມ່ນການປະຕິຮູບການສຶກສາ ບໍ່ວ່າຈະເປັນການພັດທະນາທາງດ້ານວິຊາສະເພາະ, ພັດທະນາທາງດ້ານວິຊາຊີບຄູ, ພັດທະນາທາງດ້ານເຕັກນິວິທະຍາສາດ ແລະ ເຕັກໂນໂລຊີຂໍ້ມູນຂ່າງສານທີ່ທັນສະໃໝ ເພື່ອໃຫ້ສາມາດນໍາໃຊ້ຄວາມຮູ້ ແລະ ເຕັກນິກວິທີການສອນຕ່າງໆເຂົ້າໃນການຈັດການຮຽນການສອນ ເພື່ອຮັບປະກັນຄຸນນະພາບ ຂອງການສອນ ແລະ ຮັບປະກັນປະສິດທິຜົນຂອງຜົນສໍາເລັດຂອງນັກສຶກສາເມື່ອເປັນແນວນັ້ນ ຈາກເຫດຜົນທີ່ກ່າວມານັ້ນ ຄູສອນໃນວິທະຍາໄລຄູສາລະວັນເຫັນໄດ້ເຖິງຄວາມຈໍາເປັນໃນການພັດທະນາຕົນເອງ, ສ້າງສື່ການຮຽນ-ການສອນ ແລະ ນະວັດຕະກໍາໃໝ່ໆໃຫ້ເຫດເໝາະກັບສະພາບການຮຽນ-ການສອນຈາກຮຽນແບບເຊິ່ງໜ້າມາເປັນການຮຽນແບບອອນໄລນ໌ ເຫດຜົນທີ່ກ່າວມານີ້ສອດກັບງານວິໄຈຂອງ Padmalini Singh, et al. (2021) ແລະ Ramya,N., et al. (2021) ຄົ້ນຄ້ວາໃນຫົວຂໍ້ A Comparative Study on Effectiveness of Online and Offline Learning in Higher Education. ຜົນການຄົ້ນຄວ້າພົບວ່າ: ຄູສອນທີ່ມີປະສົບການແຕກຕ່າງກັນມີຄວາມຄິດເຫັນຕໍ່

ການຈັດຕັ້ງການຮຽນ-ການສອນໃນຮູບແບບເຊິ່ງໜ້າ ແລະ ແບບອອນໄລນ໌ຄືກັນ.

3) ຜົນການປຽບທຽບຄວາມຄິດເຫັນຂອງນັກສຶກສາໃນແຕ່ລະຂັ້ນຮຽນຕໍ່ກັບການຈັດການຮຽນການສອນ ເຫັນວ່າ ຄວາມຄິດເຫັນຂອງນັກສຶກສາ ທີ່ມີຂັ້ນຮຽນແຕກຕ່າງກັນ ລະຫວ່າງການຮຽນແບບອອນໄລນ໌ ແລະ ແບບເຊິ່ງໜ້າໃນວິທະຍາໄລຄູສາລະວັນ ມີຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ, ດ້ານເຫດຜົນສ່ວນຕົວ, ດ້ານຄວາມສາມາດຂອງຄູສອນ, ດ້ານສິ່ງອຳນວຍຄວາມສະດວກ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສຳຄັນທາງ ສະຖິຕິຢູ່ທີ່ 0.05( ຍອມຮັບສົມມຸດຖານ), ນັ້ນໝາຍຄວາມວ່ານັກສຶກສາທີ່ມີຂັ້ນຮຽນສູງຫຼືມີປະສົບການຮຽນຫຼາຍປີເທົ່າຍິ່ງມີຄວາມຮູ້, ຄວາມສາມາດແຕກຕ່າງກັນ ທາງດ້ານແນວຄິດ ແລະ ວິທີການຮຽນຮູ້, ມີຄວາມກະຕືລືລົ້ນໃນການສະແຫວງຫາຄວາມຮູ້ໃໝ່ໆ, ບໍ່ວ່າການຈັດການຮຽນແບບເຊິ່ງໜ້າ ແລະ ແບບອອນໄລນ໌ກໍ່ຕາມ ນອກຈາກນີ້ຍັງສາມາດສ້າງສື່ການຮຽນດ້ວຍຕົນເອງ, ສາມາດນຳໃຊ້ເຕັກໂນໂລຊີເຂົ້າໃນການຮຽນໄດ້, ຊອກຫາຂໍ້ມູນຂ່າວສານທາງ ອີເລັກໂຕ໌ນິກ ແລະ ມີຄວາມກ້າຫານໃນການເຂົ້າຫາຄູສອນ, ຮ່ວມກິດຈະກຳກັບຄູ, ໝູ່ເພື່ອນດ້ວຍກັນ ແລະ ມີຄວາມກ້າຫານສະແດງຄວາມຄິດເຫັນ, ຕຳນິສິ່ງຂ່າວ ຕໍ່ກັບຄູສອນ ແລະ ນັກສຶກສາດ້ວຍກັນ, ສ່ວນນັກສຶກສາທີ່ມີຂັ້ນຮຽນໜ້ອຍ ແມ່ນຍັງບໍ່ມີປະສົບການທີ່ຫຼາກຫຼາຍໃນການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌, ການນຳໃຊ້ສື່ເຕັກໂນໂລຊີທີ່ທັນສະໃໝເຂົ້າໃນການຈັດການຮຽນ-ການສອນຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ຈາກເຫດຜົນທີ່ກ່າວມານີ້ມັນສະແດງໃຫ້ເຫັນເຖິງຄວາມຄິດທີ່ແຕກຕ່າງກັນ. ເຊິ່ງສອດຄ່ອງກັບຜົນການວິເຄາະຂອງ Fiqhi L.D., & Nurul R.,. (2020) ທີ່ເຮັດການຄົ້ນຄ້ວາໃນຫົວຂໍ້ Effectiveness of Online VS Offline Class For EFL Classroom. ຜົນການຄົ້ນຄ້ວາພົບວ່ານັກສຶກສາທີ່ມີຂັ້ນຮຽນຕ່າງກັນມີຄວາມຄິດແຕກຕ່າງກັນການຮຽນແບບອອນໄລນ໌ ແລະ ແບບເຊິ່ງໜ້າ. ສະນັ້ນ, ສາມາດເວົ້າໄດ້ວ່າ ຮູບແບບຂອງການຈັດການຮຽນ-ການສອນແບບເຊິ່ງໜ້າຍັງເປັນຮູບແບບໜຶ່ງທີ່ບັນດາສະຖານການສຶກສາທັງພາຍໃນ ແລະ ຕ່າງປະເທດຍັງສືບຕໍ່ນຳໃຊ້ ເພື່ອເຮັດໃຫ້ຮູບແບບການຈັດການຮຽນ-ການສອນດັ່ງກ່າວມີປະສິດທິພາບ ແລະ ຜົນສຳເລັດທາງການຮຽນຂອງຜູ້ຮຽນມີຄຸນນະພາບດີຍິ່ງຂຶ້ນ ຫຼາຍສະຖານການສຶກສາກໍໄດ້ຄົ້ນຄິດວິທີການຮຽນ, ວິທີການສອນທີ່ນຳໃຊ້ຮູບແບບການສອນແບບເຊິ່ງໜ້າເປັນພື້ນ ແລ້ວແຊກຊ້ອນຂະບວນການຕ່າງໆເຂົ້າມາຊ່ອຍບໍ່ວ່າເປັນວິທີການສອນແບບແກ້ບັນຫາ, ວິທີສອນແບບສືບຮູ້, ວິທີສອນແບບທົດລອງ, ວິທີສອນແບບປະສົມປະສານລະຫວ່າງເຊິ່ງໜ້າ ແລະ ອອນໄລນ ແລະ ວິທີອື່ນໆອີກ. ສະນັ້ນ, ສາມາດຕີລາຄາໄດ້ວ່າ ທັງຄູສອນ ແລະ ນັກສຶກສາແມ່ນມີຄວາມເພິ່ງພໍໃຈຕໍ່ການຈັດການຮຽນ-ການສອນແບບເຊິ່ງໜ້າໃນລະດັບຫຼາຍ ເຊິ່ງເປັນຜົນຄົ້ນຄວ້າທີ່ມີຄວາມໄກ້ຄຽງກັບທັດສະນະຂອງນັກການສຶກສາ ແລະ ຜົນຄົ້ນຄວ້າຂອງນັກວິໄຈທ່ານອື່ນໆ.

**3. ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບການປັບປຸງການຈັດການຮຽນ-ການສອນທີ່ວິທະຍາໄລຄູສາລະວັນໃຫ້ດີຂຶ້ນເລື້ອຍໆ** ສັງລວມວ່າ: ການຈັດຕັ້ງການຮຽນ-ການສອນຢູ່ທີ່ວິທະຍາໄລຄູສາລະວັນແມ່ນສອດຄ່ອງຕາມຫຼັກສູດການຮຽນ-ການສອນຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ ໂດຍເນັ້ນໃສ່ຮູບແບບການຮຽນການສອນທັງສອງຮູບແບບ, ເພື່ອຮັບປະກັນຄຸນນະພາບການຮຽນ-ການສອນຍັງສິ່ງເສີມໃຫ້ມີການສ້າງສື່ການຮຽນ-ການສອນທີ່ຫຼາກຫຼາຍ ແລະ ສອດຄ່ອງກັບສະພາບຕົວຈິງຂອງການປ່ຽນແປງທາງດ້ານສັງຄົມ, ຄູ-ອາຈານທີ່ສອນໃນສະຖາບັນໄດ້ປັບປຸງ,

ນິຕິກຳດ້ານການຮຽນ-ການສອນໃຫ້ສອດຄ່ອງກັບການປະຕິບັດຕົວຈິງຫຼາຍຂຶ້ນ, ໃນນັ້ນຄູ-ອາຈານຍັງມີການແລກປ່ຽນປະສົບການກັບເພື່ອນຮ່ວມງານໃນສະຖາບັນດຽວກັນຢ່າງເປັນປົກກະຕິ, ເພື່ອສ້າງຂີດຄວາມສາມາດຂອງຄູໃນການອອກແບບກິດຈະກຳ ແລະ ສ້າງນະວັດຕະກຳໃໝ່ເພື່ອພັດທະນາການຮຽນ-ການສອນໃຫ້ມີຄຸນນະພາບ ແລະ ທັນກັບສະພາບການປ່ຽນແປງຂອງສັງຄົມ, ໂດຍສະເພາະແມ່ນໃນຊ່ວງການແຜ່ລະບາດຂອງພະຍາດ ໂຄວິດ-19, ຄຽງຄູ່ກັນນັ້ນຍັງໃຫ້ຄວາມສຳຄັນໃນການປັບປຸງເຄື່ອງມືປະເມີນຜົນການຮຽນ-ການສອນໃຫ້ເໝາະສົມ ແລະ ມີລັກສະນະສ້າງສັນ ເພື່ອຮັບປະກັນຄຸນນະພາບການຮຽນ-ການສອນຂອງຄູ ແລະ ນັກສຶກສາ, ພ້ອມກັນນັ້ນຍັງຊຸກຍູ້ໃຫ້ນັກສຶກສາມີການເຮັດກິດຈະກຳຮ່ວມກັນທັງໃນເວລາຮຽນ ແລະ ນອກເວລາຮຽນເພື່ອຊອກຫາປະສົບການ ແລະ ການຮຽນຮູ້ໃຫ້ຫຼາກຫຼາຍຮູບແບບ, ນອກຈາກນັ້ນຍັງສົ່ງເສີມເຕັກນິກວິທີການຮຽນ-ການສອນໃຫ້ພຽງພໍ, ເໝາະສົມ ກັບຄູສອນ ແລະ ນັກສຶກສາໃນສະຖາບັນຂອງຕົນ, ໂດຍສະພະເາະການປ່ຽນແປງຂອງສັງຄົມໃນປັດຈຸບັນກໍ່ຄືໃນຊ່ວງການແຜ່ພະຍາດ ໂຄວິດ-19 ນີ້, ວິທະຍາໄລຄູສາລະວັນຍັງອຳນວຍຄວາມ ສະດວກດ້ານວັດຖຸ, ອຸປະກອນເຊັ່ນ: ລະບົບອິນເຕີເນັດ, ສັນຍານອິນເຕີເນັດ ແລະ ອຸປະກອນທີ່ຮັບໃຊ້ເຂົ້າໃນການຮຽນ-ການສອນ ..., ເພື່ອຕອບສະໜອງໃຫ້ຄູ ແລະ ນັກສຶກສາສາມາດເຂົ້າເຖິງຫໍສະໝຸດເອເລັກໂຕຼນິກ ແລະ ຝຶກອົບຮົມໃຫ້ມີທັກສະເຕັກນິກການນຳໃຊ້ເທັກໂນໂລຊີຂໍ້ມູນຂ່າວສານໂດຍສະເພາະແມ່ນການຈັດຕັ້ງການຮຽນ-ການສອນທີ່ວິທະຍາໄລຄູສາລະວັນ. ການຈັດຕັ້ງປະຕິບັດດັ່ງກ່າວນີ້ສອດຄ່ອງກັບແຜນຂອງກະຊວງສຶກສາທິການ ແລະ ກິລາ (2020) ແລະ ແຈ້ງການ (2020), ທີ່ກ່າວວ່າ: ໃນການປະຕິບັດແຜນຍຸດທະສາດ ການພັດທະນາຊັບພະຍາກອນມະນຸດ ໄດ້ເອົາໃຈໃສ່ເນັ້ນຄຸນນະພາບການຮຽນ-ການສອນໃນສະຖານສຶກສາທຸກຂັ້ນ ເອົາໃຈໃສ່ພັດທະນາຫຼັກສູດ ແລະ ວິທີການສິດສອນໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ ເປັນຕົ້ນ ຜົນສຳເລັດທີ່ພົ້ນເດັ່ນໃນຂະແໜງການສຶກສາ ແມ່ນເຫັນໄດ້ຈາກຜົນສຳເລັດໃນການປັບປຸງ, ຍົກລະດັບຄຸນນະພາບວິຊາການ-ວິຊາສະເພາະຂອງຄູສອນ ສົ່ງເສີມການສ້າງສື່ການສອນ, ປັບປຸງນິຕິກຳ, ແລກປ່ຽນບົດຮຽນ ພັດທະນາຄວາມຮູ້, ຄວາມສາມາດໃນຫຼາຍໆດ້ານ.

## 5. ສະຫຼຸບຜົນ

ຈາກການເກັບລວບລວມຂໍ້ມູນ ຜູ້ວິໄຈສາມາດວິເຄາະຂໍ້ມູນເປັນລາຍລະອຽດໄດ້ດັ່ງນີ້:

**1 ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ** 1) ພະນັກງານຄູ ອາຈານທັງໝົດທີ່ສະແດງຄວາມຄິດເຫັນຕໍ່ດ້ານການປະຕິບັດຫຼັກສູດແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາເປັນສ່ວນຫຼາຍ 2) ຕໍ່ກັບຊົ່ວໂມງຮຽນໃນການຈັດການຮຽນ-ການສອນ ທັງຄູສອນ ແລະ ນັກສຶກສາ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ 3) ຕໍ່ກັບດ້ານທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ບໍ່ໄດ້ປະຕິບັດເລີຍ ແຕ່ນັກສຶກສາ ພັດສະແດງຄວາມຄິດເຫັນ ໃນການປະຕິບັດ ໄດ້ ເລັກໜ້ອຍ. 4) ດ້ານການຮຽນ-ການສອນເນັ້ນປະຕິບັດຕົວຈິງ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື: ຄູສອນໃຫ້ຄວາມຄິດເຫັນ ເນັ້ນຫຼາຍ, ແຕ່ນັກສຶກສາພັດ ເນັ້ນປານກາງ. 5) ດ້ານການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດສ່ວນຫຼາຍມີຄວາມແຕກຕ່າງກັນໃນຄູສອນ ແລະ ນັກສຶກສາ ມີປານກາງ. 6) ດ້ານການຕອບສະໜອງຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບໃນນັ້ນລະດັບມີພຽງພໍ ແລະ ນັກສຶກສາ ກວມຈຳນວນຄົນຫຼາຍທີ່ສຸດ. 7) ດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ

ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີພຽງພໍ ຄູ. 8) ດ້ານການສົ່ງເສີມນັກສຶກສານຳໃຫ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນມີຫຼາຍ, ແຕ່ນັກສຶກສາພັດ ໃນລະດັບ ມີພໍພຽງ. 9) ດ້ານການນຳໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນຳໃຊ້ເຕັກໂນໂລຊີເຂົ້າໃນການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ມີພຽງພໍ ແລະ ປານກາງ ແຕ່ນັກສຶກສາ ພັດສະແດງຄວາມຄິດເຫັນ ມີພຽງພໍ. 10) ດ້ານການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ປານກາງ. 11) ດ້ານຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ ແມ່ນມີຄວາມແຕກຕ່າງກັນໃນຫຼາຍລະດັບຄື ຄູສອນໃຫ້ຄວາມຄິດເຫັນ ປານກາງ, ແຕ່ ນັກສຶກສາ ພັດສະແດງຄວາມຄິດເຫັນ ດີຫຼາຍ ແລະ ປານກາງ. 12) ດ້ານການຈັດສັນ ແລະ ສ້າງສະພາບແວດລ້ອມສົ່ງເສີມການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ເໝາະສົມປານກາງກວມຈຳນວນຄົນຫຼາຍທີ່ສຸດ. 13) ດ້ານການມີສ່ວນຮ່ວມກັບຊຸມຊົນເພື່ອສ້າງການມີສ່ວນຮ່ວມການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີປານກາງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ.**ສະພາບການຈັດການຮຽນ-ການສອນແບບອອນໄລນ໌ມີຄື:** 1) ດ້ານໄດ້ມີການແນະນຳຫຼືຝຶກອົບຮົມຂີດຄວາມສາມາດນຳໃຊ້ເຕັກໂນໂລຊີ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ປະຕິບັດປານກາງ. 2) ດ້ານປະສົບການກ່ຽວກັບລະບຽບໃນການຈັດການຮຽນ-ການສອນແບບອອນໄລນ໌ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ຮູ້ປານກາງ. 3) ດ້ານຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ບາງຄັ້ງ ກວມຈຳນວນຄົນຫຼາຍທີ່ສຸດ ຄູ. 4) ດ້ານການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແແບບອອນໄລນ໌ຫຼາຍທີ່ສຸດ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ໃຊ້ຄອມພິວເຕີແບບພົກພາ ກວມຈຳນວນຄົນຫຼາຍທີ່ສຸດ, ແຕ່ນັກສຶກສາພັດ ໃຊ້ໂທລະສັບ ກວມຈຳນວນຄົນຫຼາຍທີ່ສຸດ. 5) ດ້ານການນຳໃຊ້ເຄື່ອງມືເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ ສ່ວນຫຼາຍແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາ ແມ່ນນຳໃຊ້ຊູມ (Zoom) ກວມຈຳນວນຄົນຫຼາຍທີ່ສຸດ. 6) ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມຄິດເຫັນແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາໃຊ້ຂໍ້ມູນມືຖື (Mobile Data) ກວມເອົາຈຳນວນຄົນຫຼາຍທີ່ສຸດ. 7) ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ແພງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ, ແຕ່ນັກສຶກສາພັດແພງຫຼາຍ ກວມຈຳນວນຄົນຫຼາຍທີ່ສຸດ. 8) ດ້ານທ່ານມີຄວາມຊຳນານໃນການຈັດການຮຽນ-ການສອນແບບແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມຈຳນວນຄົນຫຼາຍທີ່ສຸດ. 9) ດ້ານບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ ສ່ວນຫຼາຍມີຄວາມຄິດເຫັນ ແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມເອົາຈຳນວນຄົນ ຫຼາຍທີ່ສຸດ.

**2. ປຽບທຽບຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ມີຄື:**

**ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນ ແບບອອນໄລນ໌**: ຄູສອນ ແລະ ນັກສຶກສາ ດ້ານຄວາມເພິ່ງພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ, ດ້ານຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ, ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນ, ດ້ານຄວາມພໍໃຈຕໍ່ສິ່ງອໍານວຍຄວາມສະດວກ ໂດຍສະເລ່ຍລວມຢູ່ໃນລະດັບ ປານກາງ.

ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນແບບເຊິ່ງໜ້າ ຄູສອນ ແລະ ນັກສຶກສາ ດ້ານຄວາມເພິ່ງພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ, ດ້ານຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ, ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນ, ດ້ານຄວາມພໍໃຈຕໍ່ສິ່ງອໍານວຍຄວາມສະດວກ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ

1)ຜົນການປຽບທຽບລະດັບຄວາມຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ຄື: ເຫັນວ່າ ຄວາມຄິດເຫັນລະຫວ່າງຄູສອນ ແລະ ນັກສຶກສາ ຕໍ່ການຮຽນແບບອອນໄລນ໌ ໃນວິທະຍາໄລຄູສາລະວັນ ໃນແຕ່ລະດ້ານດ້ານສິ່ງອໍານວຍຄວາມສະດວກ, ດ້ານເຫດຜົນສ່ວນຕົວ ແລະ ດ້ານຄວາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບອອນໄລນ໌ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສໍາຄັນທາງສະຖິຕິຢູ່ທີ່ 0.05 (ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແມ່ນຄືກັນ(ປະຕິເສດສົມມຸດຖານ). 2) ຜົນການປຽບທຽບລະດັບຄວາມຄວາມເພິ່ງພໍໃຈຕໍ່ກັບການຈັດການຮຽນ-ການສອນຮູບແບບເຊິ່ງໜ້າ ຄື: ເຫັນວ່າ ຄວາມຄິດເຫັນລະຫວ່າງຄູສອນ ແລະ ນັກສຶກສາ ຕໍ່ການຮຽນແບບເຊິ່ງໜ້າ ໃນວິທະຍາໄລຄູສາລະວັນ ດ້ານສິ່ງອໍານວຍຄວາມສະດວກ, ດ້ານເຫດຜົນສ່ວນຕົວ ແລະ ດ້ານຄວາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບອອນໄລນ໌ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສໍາຄັນທາງສະຖິຕິຢູ່ທີ່ 0.05 (ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ແມ່ນຄືກັນ(ປະຕິເສດສົມມຸດຖານ). 3) ຜົນການປຽບທຽບຄວາມຄິດເຫັນຂອງຄູສອນລະຫວ່າງການຮຽນແບບອອນໄລນ໌ ແລະ ແບບເຊິ່ງໜ້າເຫັນວ່າ ຄູສອນໃນວິທະຍາໄລຄູສາລະວັນ ທີ່ມີວຸດທິແຕກຕ່າງກັນມີຄວາມເພິ່ງພໍໃຈ ໃນດ້ານເຫດຜົນສ່ວນຕົວ, ດ້ານສິ່ງອໍານວຍຄວາມສະດວກ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສໍາຄັນທາງ ສະຖິຕິຢູ່ທີ່ 0.05( ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນດ້ານຄວາມຮູ້ເຕັກໂນໂລຊີ, ດ້ານຄວາມສາມາດຂອງຄູສອນ ບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ). 4) ຜົນການປຽບທຽບຄວາມຄິດເຫັນຂອງຄູສອນໃນວິທະຍາໄລຄູສາລະວັນ ຜູ້ທີ່ມີປະສົບການເຮັດວຽກແຕກຕ່າງກັນມີຄວາມເພິ່ງພໍໃຈ ບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ) ໝາຍຄວາມວ່າຄູສອນ ວິທະຍາໄລຄູສາລະວັນທີ່ມີປະສົບການເຮັດວຽກແຕກຕ່າງກັນ ມີຄວາມເພິ່ງພໍໃຈຄືກັນ. 5) ເຫັນວ່າ ຄວາມຄິດເຫັນຂອງນັກສຶກສາ ທີ່ມີຂັ້ນຮຽນແຕກຕ່າງກັນ ລະຫວ່າງການຮຽນແບບອອນໄລນ໌ ແລະ ແບບເຊິ່ງໜ້າໃນວິທະຍາໄລຄູສາລະວັນ ມີຄວາມເພິ່ງພໍໃຈດ້ານເຫດຜົນສ່ວນຕົວ, ດ້ານຄວາມສາມາດຂອງຄູສອນ, ດ້ານສິ່ງອໍານວຍຄວາມສະດວກ ແມ່ນມີຄວາມແຕກຕ່າງກັນ ຢ່າງມີໄນຍະສໍາຄັນທາງ ສະຖິຕິຢູ່ທີ່ 0.05( ຍອມຮັບສົມມຸດຖານ), ສ່ວນຄວາມເພິ່ງພໍໃຈໃນດ້ານຄວາມຮູ້ເຕັກໂນໂລຊີ ແມ່ນບໍ່ແຕກຕ່າງກັນ (ປະຕິເສດສົມມຸດຖານ).

**3. ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບການປັບປຸງການຈັດການຮຽນ-ການສອນທີ່ວິທະຍາໄລຄູສາລະວັນໃຫ້ດີຂຶ້ນເລື້ອຍໆມີຄື:** ຄູສອນ ແລະ ນັກສຶກສາເຫັນຄວາມສໍາຄັນທີ່ຈະຕ້ອງປັບປຸງ ໂດຍສະເລ່ຍລວມກວມເອົາເປີເຊັນຫຼາຍທີ່ສຸດ ແມ່ນ ຢູ່ລະດັບບໍ່ສໍາຄັນ.

### 6. ຄໍາຈາລຶກຄຸນ

ກ່ອນອື່ນຂ້າພະເຈົ້າຂໍຕີລາຄາສູງ ແລະ ຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ຣສ ປອ ສາຍສະໝອນ ປຣະສອນໄຊ ແລະ ຜູ້ຊ່ວຍຄູທີ່ປຶກສາ ທ່ານ ປທ. ບຸນສິງ ສໍແກ້ວມະນີ ແລະ ທ່ານ ປທ. ທິບພະວັນ ຂັນທະພອນ ທີ່ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນໍາເຮັດໃຫ້ການຂຽນວິທະຍານິພົນຂອງຂ້າພະເຈົ້າມີຜົນສໍາເລັດສູງ.

ຂໍສະແດງຄວາມຂອບໃຈມາຍັງຄະນະພັກ, ຄະນະນໍາ ພ້ອມດ້ວຍຄະນະຮັບຜິດຊອບຫຼັກສູດ ທີ່ຄະນະສຶກສາສາດ, ມະຫາວິທະຍາໄລ ຈໍາປາສັກ ທີ່ໄດ້ອໍານວຍຄວາມສະດວກ ແລະ ໃຫ້ໂອກາດຂ້າພະເຈົ້າໄດ້ສຶກສາຮຽນຮູ້ໃນຫຼັກສູດປະລິນຍາໂທ ສຶກສາສາດ ສາຂາວິທະຍາສາດການສຶກສາ. ຕະຫຼອດທ່ານຄະນະກໍາມະການປ້ອງກັນວິທະຍານິພົນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄໍາແນະນໍາ ແລະ ມີຄໍາເຫັນຕໍ່ວິທະຍານິພົນຂອງຂ້າພະເຈົ້າໄດ້ຮັບການປັບປຸງ ແລະ ມີຜົນສໍາເລັດສູງ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູ-ອາຈານທີ່ສິດສອນ ທີ່ໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການໃນແຕ່ລະວິຊາ ເຮັດໃຫ້ຂ້າພະເຈົ້າໄດ້ພັດທະນາແນວຄວາມຄິດ ແລະ ຈິນຕະນາການໃໝ່ ເພື່ອນໍາເອົາໄປຜັນຂະຫຍາຍພັດທະນາອົງການຈັດຕັ້ງຂ້າພະເຈົ້າໃນອານາຄົດ. ຂໍສະແດງຄວາມຮັກແພງເພື່ອນມິດຮ່ວມຮຸ່ນທີ່ໄດ້ແລກປ່ຽນຮຽນຮູ້ປະສົບການທັງດ້ານວິຊາການ ແລະປະສົບການຊີວິດແກ່ຂ້າພະເຈົ້າໄດ້ຮຽນຮູ້ຢ່າງເລິກເຊິ່ງ.

ຂໍຖືໂອກາດນີ້ ສະໄດ້ສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງຂອງຂ້າພະເຈົ້າ ຄືວິທະຍາໄລຄູສາລະວັນ ທີ່ໄດ້ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດຂ້າພະເຈົ້າໄດ້ຍົກລະດັບວິຊາສະເພາະຂອງຕົນຈົນໄດ້ຮັບຜົນສໍາເລັດສູງ.

ສຸດທ້າຍ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນມາຍັງພໍ່ແມ່,ຄອບຄົວ ແລະ ສັງຄົມເພື່ອນມິດຮັກແພງທີ່ໃຫ້ກໍາລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນສຶກສາຮໍ່າຮຽນຈົນໄດ້ຮັບຜົນສໍາເລັດໃນທຸກບາດກ້າວການສຶກສາຮໍ່າຮຽນໃນຕະຫຼອດສອງປີ ສະນັ້ນ, ຖ້າຫາກຂາດພາກສ່ວນ ແລະ ບຸກຄົນທີ່ສໍາຄັນດັ່ງກ່າວມາຂ້າພະເຈົ້າຄົງຈະບໍ່ຈົບການສຶກສາຄັ້ງນີ້ຢ່າງແນ່ນອນ.

### 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2021). ຄໍາສັ່ງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ. ສະບັບເລກທີ 421/ສສກ, ລົງວັນທີ 21 ເມສາ.

ກະຊວງສຶກສາທິການ ແລະ ກິລາ. (ຕຸລາ 2020:147). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025 ).

ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025. (2016: 1). ນະຄອນຫຼວງວຽງຈັນ, ເມສາ 2016.

ບຸນທິບ ສິດທິລັງສີ. (2020:1-17). ການຈັດການຮຽນການສອນອອນໄລສູ່ກອບມາດຕະຖານວິຊາຊີບ. Journal of Chulabhom Royal Academic, 1-17.

ແຈ້ງການ. (2020). ເລື່ອງການຈັດຕັ້ງກິດຈະກໍາການຮຽນ-ການສອນຊ່ວງການແຜ່ລະບາດຂອງພະຍາດໂຄໂຣນາໄວລັດ 2019. ກະຊວງສຶກສາທິການ ແລະ ກິລາ.

ແຈ້ງການ. (2021). ເລື່ອງ: ການຈັດຕັ້ງກິດຈະກໍາການຮຽນການສອນຊ່ວງການລະບາດຂອງພະຍາດໂຄໂຣນາໄວຣັສ 2019 (COVID-19).

ແຈ້ງການຂອງທ່ານເຈົ້າແຂວງໆ ສາລະວັນ. (ໄລຍະວັນທີ 23 ພຶດສະພາ 2021 ຫາ 5 ມິຖຸນາ 2021). ວ່າດ້ວຍການປະຕິບັດມາດຕະການປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ຢູ່ແຂວງ ສາລະວັນ.

Nurul Rachmah. ( 2020). Effectiveness OF Online VS Offline Class for EFL class : A Study Case.

Padmalini Singh, et al. (2021)ແລະ Ramya,N., et al. (2021). (2021). ເພື່ອສົມທຽບປະສິດທິຜົນການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌.

Stern, B.S. (2004). A comparison of online and face-to-face instruction in an undergraduate foundations of American education course. Contemporary Issues in Technology and Teacher Education, 4(2), 196-213.